# ກອງປະຊຸມທົບທວນຜົນການດຳເນີນທຸລະກິດ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ປະຈຳໄຕມາດ II ປີ 2016




ກອງປະຊຸມທົບທວນຜົນການດຳເນີນທຸລະກິດຂອງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ປະຈຳໄຕມາດ II ປີ 2016 ໄດ້ຈັດຂຶ້ນໃນວັນທີ **14 ກໍລະກົດ 2016** ເວລາ **8:00 ໂມງ** ໂດຍການເປັນປະທານຂອງ **ທ່ານ ພູຂົງ ຈັນທະຈັກ** ຜູ້ອຳນວຍການໃຫຍ່ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ. ໃນກອງປະຊຸມມີບັນດາທ່ານຄະນະອຳນວຍການ, ຫົວໜ້າພະແນກ, ຫົວໜ້າສູນ, ຫົວໜ້າສາຂາ ແລະພະນັກງານທີ່ກ່ຽວຂ້ອງຈຳນວນໜຶ່ງເຂົ້າຮ່ວມ.

ຈຸດປະສົງຂອງກອງປະຊຸມແມ່ນເພື່ອທົບທວນຄືນຜົນຂອງການດຳເນີນທຸລະກິດ ທຄຕລ ປະຈຳໄຕມາດ **II**, ທັງເປັນການລາຍງານວຽກງານຕ່າງໆທີ່ປະຕິບັດໄດ້ໃນໄຕມາດທີ່ຜ່ານມາ ແລະ ພ້ອມກັນວາງແຜນການດຳເນີນງານໃນໄຕມາດຕໍ່ໜ້າ. ນອກຈາກນັ້ນ, ແຕ່ລະພາກສ່ວນຍັງໄດ້ຍົກໃຫ້ເຫັນເຖິງບັນຫາ, ຂໍ້ຫຍຸ້ງຍາກໃນການດຳເນີນງານ ແລະ ທິດທາງໃນການແກ້ໄຂບັນຫາຕ່າງໆ ໂດຍຜ່ານການປຶກສາຫາລືກັນພາຍໃນກອງປະຊຸມ ເຊິ່ງໄດ້ມີການໃຫ້ທິດຊີ້ນຳໃນການແກ້ໄຂບັນຫາຈາກຄະນະອຳນວຍການ ທຄຕລ ແລະ ການປະກອບຄຳຄິດເຫັນຂອງບັນດາຫົວໜ້າພະແນກ, ຫົວໜ້າສູນ ແລະ ຫົວໜ້າສາຂາ ທຄຕລ ໃນທົ່ວລະບົບ.

ກອງປະຊຸມໄດ້ດຳເນີນເປັນເວລາ 2 ວັນ (**14 - 15 ກໍລະກົດ 2016** ) ຕາມວາລະກອງປະຊຸມ. ເຊິ່ງໃນຕອນທ້າຍຂອງກອງປະຊຸມ **ທ່ານ ພູຂົງ ຈັນທະຈັກ** ຜູ້ອຳນວຍການໃຫຍ່ ໄດ້ໂອ້ລົມກັບບັນດາພາກສ່ວນຕ່າງໆທີ່ເຂົ້າຮ່ວມໂດຍເນັ້ນໜັກໃນການປຸກລະດົມພະນັກງານໃຫ້ມີຄວາມສາມັກຄີກັນຢ່າງແໜ້ນແຟ້ນ ແລະ ກໍ່ສ້າງພະນັກງານ

ສືບທອດປ່ຽນແທນ, ເອົາໃຈໃສ່ວຽກງານກວດກາ ແລະ ຕ້ານປະກົດການຫຍໍ້ທໍ້ທີ່ອາດຈະເກີດຂຶ້ນ, ທັ້ງນີ້ເພື່ອເຮັດໃຫ້ຜົນການດຳເນີນທຸລະກິດຂອງ ທຄຕລ ບັນລຸຕາມເປົ້າໝາຍທີ່ວາງໄວ້.





ພາບ ແລະ ຂຽນຂ່າວໂດຍ: ທ. ສຸລິຍົງ ສຸກຈັນດີ